**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ — ເລກທີ 1703/ກຕສ.

ນະຄອນຫຼວງວຽງຈັນ, ວັນທີ 22 ມິຖຸນາ 2023

# ຂໍ້ຕົກລົງ

## ວ່າດ້ວຍ ເລກໝາຍໂທລະສັບພິເສດ

- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ເລກທີ 625/ນຍ, ວັນທີ 22 ຕຸລາ 2021;
- ອີງຕາມກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ), ເລກທີ 05/ສພຊ, ວັນທີ 16 ພະຈິກ 2021;
- ອີງຕາມການຕົກລົງເຫັນດີ ຂອງກອງປະຊຸມຄະນະປະຈຳພັກ, ຄັ້ງວັນທີ 8 ກຸມພາ 2022;
- ອີງຕາມການຄົ້ນຄ້ວາສະເໜີ ຂອງອົງການດັດສົມໂທລະຄົມມະນາຄົມ, ສະບັບເລກທີ 268/ອດທ, ລົງວັນທີ 23 ມີນາ 2023.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ເພື່ອຮັບປະກັນຄວາມເປັນເອກະພາບ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການນຳໃຊ້ເລກໝາຍໂທລະສັບພິເສດ ໃນຂອບເຂດທົ່ວປະເທດ ແນໃສ່ ຊຸກຍູ້ການນຳໃຊ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ ແລະ ສັງຄົມ.

### ມາດຕາ 2. (ປັບປຸງ) ເລກໝາຍໂທລະສັບພິເສດ

ເລກໝາຍໂທລະສັບພິເສດແມ່ນ ໜຶ່ງຊຸດເລກໝາຍ ທີ່ມີ ຕົວເລກ, ຕົວໜັງສື, ເຄື່ອງໝາຍໃດໜຶ່ງ ແລະ/ຫຼື ຫຼາຍຢ່າງລວມເຂົ້າກັນ ເພື່ອໃຫ້ຈື່ງ່າຍ ແລະ ແຕກຕ່າງຈາກ ເລກໝາຍໂທລະສັບປະເພດອື່ນ ຊຶ່ງສາມາດ ໂທເຂົ້າ, ໂທອອກ, ຮັບ-ສົ່ງຂໍ້ຄວາມສັ້ນ ໃນຂອບເຂດ ສປປ ລາວ.

**ມາດຕາ 3. (ປັບປຸງ) ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຫົວໜ່ວຍທຸລະກິດ** ໝາຍເຖິງ ບໍລິສັດ, ວິສາຫະກິດ ຫຼື ພາກສ່ວນອື່ນ ທີ່ດຳເນີນທຸລະກິດຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
2. **ຜູ້ໃຫ້ບໍລິການໂທລະຄົມມະນາຄົມ** ໝາຍເຖິງ ບໍລິສັດໂທລະຄົມມະນາຄົມ ຜູ້ທີ່ໄດ້ຮັບອະນຸຍາດສະໜອງການໃຫ້ບໍລິການໂທລະຄົມມະນາຄົມ ປະເພດໜຶ່ງ ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;
3. **ຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດນຳໃຊ້ ຫຼື ໃຫ້ບໍລິການເລກໝາຍໂທລະສັບພິເສດຈາກ ຂະແໜງ ເຕັກໂນໂລຊີ ແລະ ການສື່ສານ.
4. **ຜູ້ໃຊ້ບໍລິການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ທີ່ໃຊ້ບໍລິການເລກໝາຍໂທລະສັບພິເສດເຊັ່ນ: ການໂທເຂົ້າ ແລະ/ຫຼື ການຮັບ-ສົ່ງຂໍ້ຄວາມສັ້ນ;
5. **ວຽກງານສຸກເສີນ** ໝາຍເຖິງ ວຽກງານອັນຮີບດ່ວນຂອງພັກ-ລັດ ເພື່ອຊ່ວຍເຫຼືອສັງຄົມ ແລະ ພາກສ່ວນຕ່າງໆ ເຊັ່ນ: ໂຮງໝໍ, ແຈ້ງເຕືອນໄພ, ອັກຄີໄພ, ກູ້ໄພ ແລະ ມູນລະນິທິ;
6. **ວຽກງານສຳຄັນລະດັບຊາດ** ໝາຍເຖິງ ວຽກງານທີ່ລັດຖະບານຕົກລົງເປັນວຽກງານສຳຄັນລະດັບຊາດສະເພາະກິດໃດໜຶ່ງ ເຊັ່ນ: ການແກ້ໄຂບັນຫາການແຜ່ລະບາດຂອງພະຍາດ, ໄພພິບັດທາງທຳມະຊາດ, ກອງປະຊຸມພັກ-ລັດ, ງານມະຫາກຳກິລາ ແລະ ວຽກງານສຳຄັນລະດັບຊາດອື່ນ;
7. **ວຽກງານອົງການຈັດຕັ້ງພັກ-ລັດ** ໝາຍເຖິງ ວຽກງານສະເພາະຂອງກະຊວງ, ອົງການທຽບເທົ່າກະຊວງແຕ່ຂັ້ນສູນກາງ ຫາ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ;
8. **ວຽກງານບໍ່ຫວັງຜົນກຳໄລ** ໝາຍເຖິງ ວຽກງານຂອງອົງການຈັດຕັ້ງສັງຄົມ ທັງພາຍໃນ ແລະ ສາກົນທີ່ມີທີ່ຕັ້ງຢູ່ ສປປ ລາວ ບໍ່ໄດ້ສັງກັດໃນອົງການຈັດຕັ້ງພັກ-ລັດ ໂດຍເຄື່ອນໄຫວວຽກງານ ຕາມກົດໝາຍ ແລະ ລະບຽບການ;
9. **ອົງການຄຸ້ມຄອງວຽກງານໂທລະຄົມມະນາຄົມ** ໝາຍເຖິງ ການຈັດຕັ້ງຄຸ້ມຄອງວຽກງານໂທລະຄົມມະນາຄົມ ຂັ້ນສູນກາງ ແລະ ທ້ອງຖິ່ນ;
10. **ມູນຄ່າການນຳໃຊ້ບໍລິການໂທລະຄົມມະນາຄົມ** ໝາຍເຖິງ ຄ່າຕິດຕັ້ງ, ຄ່າເຊົ່າ, ຄ່າໂທເຂົ້າ, ຄ່າໂທອອກ, ຄ່າສົ່ງຂໍ້ຄວາມເຂົ້າ, ຄ່າສົ່ງຂໍ້ຄວາມອອກ ແລະ ຄ່າເຊື່ອມຕໍ່ເຄືອຂ່າຍ;
11. **ລະບົບສູນກາງໃຫ້ບໍລິການເລກໝາຍໂທລະສັບພິເສດ** ໝາຍເຖິງ ລະບົບສູນກາງ ໂທເຂົ້າ, ໂທອອກ, ສົ່ງຂໍ້ຄວາມເຂົ້າ, ສົ່ງຂໍ້ຄວາມອອກ ແລະ ເຊື່ອມຕໍ່ເຄືອຂ່າຍ ທີ່ຜູ້ໃຊ້ບໍລິການສາມາດນຳໃຊ້ ພ້ອມກັນຫຼາຍຄົນ;
12. **ເລກໝາຍໂທລະສັບພິເສດ ເພີ່ມລະຫັດແຂວງ** ໝາຍເຖິງ ການນຳໃຊ້ເລກໝາຍໂທລະສັບພິເສດ ທີ່ມີຢູ່ແລ້ວ ມາເພີ່ມລະຫັດແຂວງຕື່ມທາງດ້ານໜ້າ ເພື່ອອຳນວຍຄວາມສະດວກໃນການໄຈ້ແຍກຂອບເຂດ

ການນຳໃຊ້ ເປັນແຂວງ/ນະຄອນຫຼວງ ແລະ ເປັນການເພີ່ມຮູບແບບ ຂອງການຈັດສັນເລກໝາຍໂທລະສັບພິເສດ ທີ່ມີຈຳນວນຈຳກັດໃຫ້ໃຊ້ຢ່າງມີປະສິດທິພາບ;

13. **ເລກໝາຍໂທລະສັບພິເສດ ຜູ້ໃຫ້ບໍລິການໂທລະຄົມມະນາຄົມນຳໃຊ້ພາຍໃນເຄືອຂ່າຍ** ໝາຍເຖິງ ເລກໝາຍໂທລະສັບພິເສດ ທີ່ຈັດສັນໃຫ້ ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເພື່ອໃຫ້ບໍລິການສະເພາະ ພາຍໃນເຄືອຂ່າຍຂອງຕົນ;

14. **ເລກໝາຍໂທລະສັບພິເສດ ປະສົມກັບເຄື່ອງໝາຍໂທລະຄົມມະນາຄົມ** ໝາຍເຖິງ ການນຳໃຊ້ເລກໝາຍໂທລະສັບພິເສດ ຮ່ວມກັບເຄື່ອງໝາຍໃດໜຶ່ງ ຫຼື ຫຼາຍອັນ ຕື່ມໃສ່ ດ້ານໜ້າ ແລະ/ຫຼື ດ້ານຫຼັງ;

15. **ການສະຫງວນເລກໝາຍໂທລະສັບພິເສດ** ໝາຍເຖິງ ເກັບຮັກສາເລກໝາຍໂທລະສັບພິເສດໃດໜຶ່ງ ເພື່ອກຽມຮອງຮັບການນຳໃຊ້ໃນອານາຄົດ ບົນພື້ນຖານຄວາມຮຽກຮ້ອງຕ້ອງການຂອງການບໍລິການ.

**ມາດຕາ 4. (ປັບປຸງ) ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ທີ່ນຳໃຊ້ເລກໝາຍໂທລະສັບພິເສດພາຍໃນຂອງ ສປປ ລາວ.

## ໝວດທີ 2

## ການຈັດສັນ ແລະ ຮູບແບບເລກໝາຍໂທລະສັບພິເສດ

**ມາດຕາ 5. (ໃໝ່) ຫຼັກການຈັດສັນເລກໝາຍໂທລະສັບພິເສດ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຈັດສັນເລກໝາຍໂທລະສັບພິເສດ ບົນຫຼັກການ ຮັບປະກັນຄວາມສະເໝີພາບ, ໂປ່ງໃສ, ເປີດເຜີຍ, ປະຢັດ, ສອດຄ່ອງກັບ ຍຸດທະສາດ, ແຜນພັດທະນາ ແລະ ລະບຽບການໃນແຕ່ລະໄລຍະຂອງ ກະຊວງ ພ້ອມທັງສອດຄ່ອງກັບຫຼັກການສາກົນ. ໃຫ້ສິດທິພິເສດແກ່ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກສຳຄັນລະດັບຊາດ ແລະ ວຽກງານສຸກເສີນຂອງພາກລັດ.

**ມາດຕາ 6. (ໃໝ່) ຮູບແບບເລກໝາຍໂທລະສັບພິເສດ**

ເລກໝາຍໂທລະສັບພິເສດ ປະກອບມີຮູບແບບດັ່ງນີ້:

1. ເລກໝາຍໂທລະສັບພິເສດ 03 ຕົວເລກ;
2. ເລກໝາຍໂທລະສັບພິເສດ 04 ຕົວເລກ;
3. ເລກໝາຍໂທລະສັບພິເສດ ເພີ່ມລະຫັດແຂວງ;
4. ເລກໝາຍໂທລະສັບພິເສດ ປະສົມກັບເຄື່ອງໝາຍໂທລະຄົມມະນາຄົມ;
5. ເລກໝາຍໂທລະສັບພິເສດ ຜູ້ໃຫ້ບໍລິການໂທລະຄົມມະນາຄົມນຳໃຊ້ພາຍໃນເຄືອຂ່າຍ;
6. ເລກໝາຍໂທລະສັບພິເສດອື່ນ.

**ມາດຕາ 7. (ໃໝ່) ການຈັດສັນເລກໝາຍໂທລະສັບພິເສດ 03 ຕົວເລກ**

ການຈັດສັນເລກໝາຍໂທລະສັບພິເສດ 03 ຕົວເລກມີດັ່ງນີ້:

1. ເລກໝາຍ 19X ແມ່ນຈັດສັນໃຫ້ວຽກງານສຸກເສີນຂອງລັດ;
2. ເລກໝາຍ 10X, 11X (ຍົກເວັ້ນ 112), 17X ແລະ 18X ແມ່ນຈັດສັນໃຫ້ແກ່ ຫົວໜ່ວຍທຸລະກິດ;
3. ເລກໝາຍ 13X, 15X ແລະ 16X ແມ່ນຈັດສັນໃຫ້ວຽກສຳຄັນລະດັບຊາດ ແລະ ວຽກງານອົງການຈັດຕັ້ງພັກ-ລັດ;
4. ເລກໝາຍ 112, 14X ແມ່ນສະຫງວນໄວ້ນຳໃຊ້ໃນອານາຄົດ;
5. ໃນນັ້ນ X ແມ່ນຕົວເລກແຕ່ 0 ຫາ 9.

**ມາດຕາ 8. (ໃໝ່) ການຈັດສັນເລກໝາຍໂທລະສັບພິເສດ 04 ຕົວເລກ**

ການຈັດສັນເລກໝາຍໂທລະສັບພິເສດ 04 ຕົວເລກມີດັ່ງນີ້:

1. ເລກໝາຍ 119X ຈັດສັນໃຫ້ວຽກງານສຸກເສີນຂອງລັດ;
2. ເລກໝາຍ 10XX, 1100-1149, 131X-133X, 14XX, 155X-159X, 165X-169X, 18XX, 19XX ແມ່ນຈັດສັນໃຫ້ຫົວໜ່ວຍທຸລະກິດ;
3. ເລກໝາຍ 115X-118X, 130X, 134X-139X ແລະ 150X-154X ຈັດສັນໃຫ້ວຽກສຳຄັນລະດັບຊາດ ແລະ ວຽກງານອົງການຈັດຕັ້ງພັກ-ລັດ;
4. ເລກໝາຍ 160X-164X ແມ່ນຈັດສັນໃຫ້ວຽກງານບໍ່ຫວັງຜົນກຳໄລ;
5. ເລກໝາຍ 12XX, 17XX ແມ່ນສະຫງວນໄວ້ນຳໃຊ້ໃນອານາຄົດ;
6. ໃນນັ້ນ X ແມ່ນ ຕົວເລກ ແຕ່ 0 ຫາ 9.

**ມາດຕາ 9. (ໃໝ່) ການຈັດສັນເລກໝາຍໂທລະສັບພິເສດ 03 ແລະ 04 ຕົວເລກ ເພີ່ມລະຫັດແຂວງ**

ເລກໝາຍໂທລະສັບພິເສດ 03 ແລະ 04 ຕົວເລກ ເພີ່ມລະຫັດແຂວງ ນຳໃຊ້ເພື່ອໃຫ້ບໍລິການສະເພາະຂອບເຂດແຂວງໃດໜຶ່ງ, ມີການຈັດສັນຕາມ ມາດຕາ 7 ແລະ 8 ຂອງຂໍ້ຕົກລົງສະບັບນີ້ໂດຍເພີ່ມລະຫັດຂອງແຕ່ລະແຂວງເຂົ້າດ້ານໜ້າ ຄືດັ່ງລຸ່ມນີ້:
ຕົວຢ່າງ: ລະຫັດແຂວງ + ເລກໝາຍພິເສດ 03 ຫຼື 04 ຕົວເລກ " 034 + 191 ຫຼື 034 + 1191".

**ມາດຕາ 10. (ໃໝ່) ການຈັດສັນເລກໝາຍໂທລະສັບພິເສດ 03 ແລະ 04 ຕົວເລກ ໃຊ້ຮ່ວມກັບສັນຍາລັກ**

ເລກໝາຍໂທລະສັບພິເສດ 03 ແລະ 04 ຕົວເລກ ໃຊ້ຮ່ວມກັບສັນຍາລັກ, ມີການຈັດສັນຕາມ ມາດຕາ 7 ແລະ 8 ຂອງຂໍ້ຕົກລົງສະບັບນີ້ໂດຍເພີ່ມສັນຍາລັກເຂົ້າດ້ານໜ້າ ແລະ/ຫຼື ດ້ານຫຼັງຄືດັ່ງລຸ່ມນີ້:

ຕົວຢ່າງ: ສັນຍາລັກ + ເລກໝາຍພິເສດ 03 ຫຼື 04 ຕົວເລກ

* 191 ຫຼື * 1191

ເຄື່ອງໝາຍ + ເລກໝາຍພິເສດ 03 ຫຼື 04 ຕົວເລກ + ເຄື່ອງໝາຍ.

*191# ຫຼື *1191#

**ມາດຕາ 11. (ໃໝ່) ການຈັດສັນເລກໝາຍໂທລະສັບພິເສດ ໃຫ້ແກ່ຜູ້ໃຫ້ບໍລິການໂທລະຄົມມະນາຄົມ.**

ການຈັດສັນເລກໝາຍໂທລະສັບພິເສດ 03 ແລະ 04 ຕົວເລກ ໃຫ້ແກ່ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເພື່ອນໍາໃຊ້ພາຍໃນເຄືອຂ່າຍຂອງຕົນ, ມີດັ່ງນີ້:

- ປະເພດ 03 ຕົວເລກ AXX ;
- ປະເພດ 04 ຕົວເລກ AXXX;
- ປະເພດ 03 ຕົວເລກ AXX + ເຄື່ອງໝາຍ;
- ປະເພດ 04 ຕົວເລກ AXXX; + ເຄື່ອງໝາຍ;
- ປະເພດ ເຄື່ອງໝາຍ + ເລກໝາຍພິເສດ 03 ຕົວເລກ + ເຄື່ອງໝາຍ;
- ປະເພດ ເຄື່ອງໝາຍ + ເລກໝາຍພິເສດ 04 ຕົວເລກ + ເຄື່ອງໝາຍ.

ໃນນັ້ນ A ແມ່ນຕົວເລກ 1 ຫາ 9 ແລະ X ແມ່ນຕົວເລກແຕ່ 0 ຫາ 9, ຍົກເວັ້ນເລກໝາຍທີ່ໄດ້ຈັດສັນ ໃຫ້ແກ່ພາກສ່ວນອື່ນແລ້ວ.

**ມາດຕາ 12. (ໃໝ່) ການແບ່ງກຸ່ມເລກໝາຍໂທລະສັບພິເສດ 03 ແລະ 04 ຕົວເລກ**

ເລກໝາຍໂທລະສັບພິເສດ 03 ແລະ 04 ຕົວເລກ ແບ່ງອອກເປັນ 02 ກຸ່ມຄືດັ່ງລຸ່ມນີ້:

1. **ກຸ່ມເລກໝາຍໂທລະສັບພິເສດ 03 ແລະ 04 ຕົວເລກ ທີ່ເປັນເລກງາມ** ແມ່ນກຸ່ມເລກໝາຍໂທລະສັບພິເສດສະເພາະ ທີ່ມີຄວາມຕ້ອງການສູງ ເຊັ່ນ: ເລກເປົ່າ 3 ຫຼື 4 ຕົວເລກ, ເລກລຽງທາງ ໜ້າ ຫຼື ຫຼັງ 3 ຕົວເລກຂຶ້ນໄປ ແລະ ເລກຄູ່;
2. **ກຸ່ມເລກໝາຍໂທລະສັບພິເສດ 03 ແລະ 04 ຕົວເລກ ທີ່ເປັນທົ່ວໄປ** ແມ່ນກຸ່ມເລກໝາຍໂທລະສັບພິເສດ ທີ່ບໍ່ໄດ້ລະບຸໄວ້ໃນ ຂໍ້ 1 ຂອງມາດຕານີ້.

**ມາດຕາ 13. (ໃໝ່) ການດັດສົມເລກໝາຍໂທລະສັບພິເສດທີ່ບໍ່ສອດຄ່ອງກັບການຈັດສັນ**

ສຳລັບຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ກ່ອນຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແຕ່ເລກໝາຍໂທລະສັບພິເສດ ບໍ່ສອດຄ່ອງຕາມການຈັດສັນ ທີ່ລະບຸໃນມາດຕາ 7, 8, 9, 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້ ຕ້ອງໄດ້ດຳເນີນການປັບປຸງໃຫ້ຖືກຕ້ອງຕາມການຈັດສັນ ໂດຍປະຕິບັດຕາມດັ່ງລຸ່ມນີ້:

1. ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ອອກແຈ້ງການຫາພາກສ່ວນທີ່ນຳໃຊ້ເລກໝາຍໂທລະສັບພິເສດ ທີ່ບໍ່ສອດຄ່ອງກັບແຜນຈັດສັນ ເພື່ອແຈ້ງໃຫ້ຜູ້ນຳໃຊ້ມາດຳເນີນການປັບປຸງເລກໝາຍໂທລະສັບພິເສດ;
2. ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ຫຼັງຈາກໄດ້ຮັບແຈ້ງການ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ໃຫ້ສະເໜີຫາ ຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ຕາມການແບ່ງຂັ້ນຄຸ້ມຄອງວຽກງານດັ່ງກ່າວ ເພື່ອຄົ້ນຄວ້າພິຈາລະນາ ອອກອະນຸຍາດນຳໃຊ້ພາຍໃນ ສິບ ວັນລັດຖະການພາຍຫຼັງ ປະກອບເອກະສານຢ່າງຄົບຖ້ວນ ແລະ ຖືກຕ້ອງ;
3. ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຄົ້ນຄວ້າພິຈາລະນາ, ຈັດສັນ ແລະ ອອກອະນຸຍາດ ເລກໝາຍໂທລະສັບພິເສດໃໝ່, ພ້ອມທັງ ອອກແຈ້ງການຫາພາກສ່ວນທີ່ກ່ຽວຂ້ອງ ພາຍໃນສິບວັນລັດຖະການເພື່ອດຳເນີນການເປີດບໍລິການ;
4. ຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ຕ້ອງດຳເນີນການໂຄສະນາເຜີຍແຜ່ ເລກໝາຍໂທລະສັບພິເສດໃໝ່ ໃຫ້ຜູ້ໃຊ້ບໍລິການຮັບຊາບຕໍ່ກັບການປັບປຸງແປງ;
5. ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ອະນຸຍາດໃຫ້ນຳໃຊ້ເລກໝາຍໂທລະສັບພິເສດເກົ່າເປັນໄລຍະເວລາ ຫົກເດືອນ ໂດຍເປີດນຳໃຊ້ຄຽງຄູ່ກັບ ເລກໝາຍໂທລະສັບພິເສດໃໝ່, ຍົກເວັ້ນ ອົງການຈັດຕັ້ງພັກ-ລັດ ຈະພິຈາລະນາເປັນອັນສະເພາະ;
6. ຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ຕ້ອງປະສານສົມທົບກັບ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເພື່ອຕິດຕາມ ແລະ ລາຍງານ ສະພາບການນຳໃຊ້ເລກໝາຍໂທລະສັບພິເສດໃໝ່ ໃຫ້ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຮັບຊາບທຸກໆ ຫົກເດືອນ.

## ໝວດທີ 3

## ການອອກອະນຸຍາດ

**ມາດຕາ 14. (ໃໝ່) ຫຼັກການພິຈາລະນາອອກອະນຸຍາດ ນຳໃຊ້ເລກໝາຍໂທລະສັບພິເສດ**

ການນຳໃຊ້ເລກໝາຍໂທລະສັບພິເສດແມ່ນ ການໃຫ້ບໍລິການເລກໝາຍໂທລະສັບພິເສດ ຂອງຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຕາມແຜນຈັດສັນເລກໝາຍໂທລະສັບພິເສດ ເພື່ອອຳນວຍຄວາມສະດວກໃນການດຳເນີນທຸລະກິດຫຼື/ແລະ ບໍລິການສັງຄົມ ເຮັດໃຫ້ຜູ້ໃຊ້ບໍລິການໃນຂອບເຂດທົ່ວປະເທດສາມາດໃຊ້ບໍລິການພ້ອມກັນຫຼາຍຄົນຕໍ່ຄັ້ງ, ໂດຍມີຫຼັກການພິຈາລະນາອອກອະນຸຍາດໃຫ້ນຳໃຊ້ ດັ່ງນີ້:

1. ສອດຄ່ອງກັບ ການຈັດສັນເລກໝາຍໂທລະສັບ ໃນແຕ່ລະໄລຍະ;
2. ຮັບປະກັນ ການປະຕິບັດການຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຢ່າງຖືກຕ້ອງ ແລະ ຄົບຖ້ວນ;
3. ຮັບປະກັນ ຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງຂໍ້ມູນທີ່ສະໜອງໃຫ້ຂະແໜງ ການເຕັກໂນໂລຊີ ແລະ ການສື່ສານ;
4. ໃຫ້ບູລິມະສິດ ແກ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານຂອງອົງການຈັດຕັ້ງພັກ-ລັດ, ວຽກງານສຸກເສີນ ແລະ ວຽກງານສຳຄັນລະດັບຊາດ;

**ມາດຕາ 15. (ປັບປຸງ) ອາຍຸໃບອະນຸຍາດ ແລະ ເງື່ອນໄຂການຂໍອະນຸຍາດນຳໃຊ້ ເລກໝາຍໂທລະສັບພິເສດ**

ອາຍຸໃບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ແມ່ນໜຶ່ງປີ ໂດຍສິ້ນສຸດຕາມປີສົກງົບປະມານ ຄືວັນທີ 31 ທັນວາ ຂອງທຸກປີ.

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາອອກໃບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ຕາມເງື່ອນໄຂດັ່ງລຸ່ມນີ້:

1. ນິຕິບຸກຄົນ ທີ່ໄດ້ຮັບການສ້າງຕັ້ງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ມີສຳນັກງານທີ່ຕັ້ງຢູ່ ໃນ ສປປ ລາວ;
3. ມີບຸກຄະລາກອນຮັບສາຍຈຳນວນທີ່ພຽງພໍ ແລະ ມີລະບົບເຕັກນິກທີ່ສາມາດໂທເຂົ້າຫຼາຍສາຍພ້ອມກັນ;

**ສຳລັບຫົວໜ່ວຍທຸລະກິດ ຕ້ອງມີເງື່ອນໄຂເພີ່ມຕື່ມໃດໜຶ່ງ ລຸ່ມນີ້:**

4. ມີທຶນຈົດທະບຽນ 10 ຕື້ກີບຂຶ້ນໄປ;
5. ທຸລະກິດຂອງຕົນມີພື້ນທີ່ໃຫ້ບໍລິການແກ່ລູກຄ້າ ສອງສ່ວນສາມ ຂອງປະເທດ, ຍົກເວັ້ນຮູບແບບເລກໝາຍໂທລະສັບພິເສດ ທີ່ລະບຸໄວ້ໃນຂໍ້ 03 ມາດຕາ 06 ຂອງຕົກລົງສະບັບນີ້;
6. ມີຜູ້ໂທເຂົ້າເລກໝາຍໂທລະສັບ ທີ່ໃຫ້ບໍລິການຂອງຕົນຢ່າງໜ້ອຍ 300 ຄັ້ງຕໍ່ເດືອນຂຶ້ນໄປ ໂດຍໄດ້ຮັບການຢັ້ງຢືນຈາກ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຜູ້ທີ່ຕິດຕັ້ງເລກໝາຍດັ່ງກ່າວ, ຍົກເວັ້ນຮູບແບບເລກໝາຍໂທລະສັບພິເສດ ທີ່ລະບຸໄວ້ໃນຂໍ້ 03 ມາດຕາ 06 ຂອງຕົກລົງສະບັບນີ້;

**ມາດຕາ 16. (ປັບປຸງ) ການປະກອບເອກະສານຂໍອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ**

ການປະກອບເອກະສານຂໍອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ແມ່ນປະຕິບັດດັ່ງລຸ່ມນີ້:

1. ຄຳຮ້ອງ ຕາມແບບພິມ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
2. ແຜນການຕິດຕັ້ງອຸປະກອນ ທີ່ຈະນຳໃຊ້ເລກໝາຍໂທລະສັບພິເສດ;
3. ສຳລັບມູນນິທິ ຕ້ອງມີຂໍ້ຕົກລົງສ້າງຕັ້ງ ແລະ ເອກະສານທີ່ກ່ຽວຂ້ອງ ຈາກອົງການຈັດຕັ້ງລັດທີ່ຄຸ້ມຄອງ.

**ສໍາລັບຫົວໜ່ວຍທຸລະກິດ ຕ້ອງປະກອບເອກະສານ ເພີ່ມຕື່ມດັ່ງລຸ່ມນີ້:**

4. ສໍາເນົາໃບທະບຽນວິສາຫະກິດ ຫຼື/ແລະ ສໍາເນົາອະນຸຍາດການລົງທຶນ;
5. ສໍາເນົາໃບທະບຽນອາກອນ ສໍາລັບຫົວໜ່ວຍທຸລະກິດທີ່ສ້າງຕັ້ງໃໝ່;
6. ສໍາເນົາໃບຢັ້ງຢືນມອບພັນທະອາກອນປະຈໍາປີ;
7. ເອກະສານຢັ້ງຢືນຂໍ້ມູນ ການໂທເຂົ້າເລກໝາຍໂທລະສັບທີ່ໃຫ້ບໍລິການ ສາມເດືອນຍ້ອນຫຼັງ ຈາກຜູ້ໃຫ້ບໍລິການໂທລະຄົມມະນາຄົມ.

**ມາດຕາ 17. (ໃໝ່) ການຕໍ່ໃບອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ.**

ຜູ້ໄດ້ຮັບອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ ຕ້ອງໄດ້ຕໍ່ໃບອະນຸຍາດການນໍາໃຊ້ເລກໝາຍໂທລະສັບພິເສດໃນແຕ່ລະປີ ໂດຍສະເໜີຂໍຕໍ່ໃບອະນຸຍາດ ຫາ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກ່ອນໃບອະນຸຍາດໝົດອາຍຸ ສິບຫ້າວັນ.

ການປະກອບເອກະສານຂໍຕໍ່ອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ ແມ່ນປະຕິບັດດັ່ງລຸ່ມນີ້:

1. ຄໍາຮ້ອງ ຕາມແບບພິມຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
2. ໃບອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ ຂອງປີຜ່ານມາ;
3. ເອກະສານຢັ້ງຢືນຂໍ້ມູນການໂທເຂົ້າເລກໝາຍໂທລະສັບພິເສດ ສາມເດືອນຍ້ອນຫຼັງຈາກ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
4. ສໍາເນົາໃບຢັ້ງຢືນມອບພັນທະອາກອນປະຈໍາປີ ແລະ ໃບທະບຽນວິສາຫະກິດ (ສໍາລັບຫົວໜ່ວຍທຸລະກິດ).

**ມາດຕາ 18. (ໃໝ່) ເງື່ອນໄຂການຕໍ່ໃບອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ.**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາຕໍ່ໃບອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ ຕາມເງື່ອນໄຂດັ່ງລຸ່ມນີ້:

1. ນໍາໃຊ້ເລກໝາຍໂທລະສັບພິເສດບໍ່ຂັດກັບ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ຊໍາລະຄ່າທໍານຽມ ແລະ ຄ່າບໍລິການ ຖືກຕ້ອງ ແລະ ຄົບຖ້ວນ;
3. ມີຜູ້ໂທເຂົ້ານໍາໃຊ້ເລກໝາຍໂທລະສັບພິເສດຂອງຕົນ ຢ່າງໜ້ອຍ 300 ຄັ້ງຕໍ່ເດືອນ ໃນໄລຍະເວລາ 03 ເດືອນຕໍ່ເນື່ອງ ໂດຍໄດ້ຮັບການຢັ້ງຢືນຈາກ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ.

**ມາດຕາ 19. (ໃໝ່) ການໂຈະ ໃບອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ**

ໃບອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ໄດ້ຮັບໃບອະນຸຍາດເລກໝາຍໂທລະສັບພິເສດ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;
2. ໃຫ້ບໍລິການບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ຂໍອະນຸຍາດນໍາໃຊ້;

3. ບໍ່ມາຕໍ່ໃບອະນຸຍາດເລກໝາຍໂທລະສັບພິເສດ ຫຼັງຈາກໃບອະນຸຍາດໝົດອາຍຸນຳໃຊ້ ສາມສິບວັນ;
4. ບໍ່ຊຳລະຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ ພາຍໃນໄລຍະເວລາສາມສິບວັນ ທີ່ໄດ້ອອກໃບສັ່ງມອບ ຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ;
5. ກໍລະນີອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 20. (ປັບປຸງ) ການຍົກເລີກ ໃບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ**

ໃບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ໄດ້ຮັບໃບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;
2. ບໍ່ປັບປຸງແກ້ໄຂຕາມສາເຫດທີ່ມີການໂຈະ;
3. ໂອນເລກໝາຍໂທລະສັບພິເສດ ໃຫ້ຜູ້ອື່ນນຳໃຊ້ ໂດຍບໍ່ໄດ້ຮັບອະນຸຍາດຈາກ ຂະແໜງ ເຕັກໂນໂລຊີ ແລະ ການສື່ສານ;
4. ບໍ່ມາຕໍ່ໃບອະນຸຍາດເລກໝາຍໂທລະສັບພິເສດ ຫຼັງຈາກໃບອະນຸຍາດໝົດອາຍຸນຳໃຊ້ ຫົກສິບວັນ;
5. ບໍ່ຊຳລະຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ ພາຍໃນໄລຍະເວລາຫົກສິບວັນ ທີ່ໄດ້ອອກໃບສັ່ງມອບ ຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ;
6. ລະເມີດກົດໝາຍ, ລະບຽບການຢ່າງຮ້າຍແຮງ ແລະ ສ້າງຜົນເສຍຫາຍຢ່າງຫຼວງຫຼາຍ ຕໍ່ເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
7. ກໍລະນີເປັນວຽກສະເພາະກິດໃດໜຶ່ງ ຂອງລັດຖະບານ ຫາກສິ້ນສຸດໄລຍະເວລາຈັດຕັ້ງປະຕິບັດວຽກສະເພາະກິດດັ່ງກ່າວ;
8. ມີກໍລະນີອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 21. (ໃໝ່) ການພິຈາລະນາ.**

ສຳລັບການອອກອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາ ພາຍໃນ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ.

ສຳລັບການຕໍ່ອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາ ພາຍໃນເຈັດວັນລັດຖະການ ນັບແຕ່ມື້ທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ.

ໃນກໍລະນີບໍ່ອະນຸຍາດ, ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຕ້ອງແຈ້ງຕອບຜູ້ທີ່ຂໍອະນຸຍາດເປັນລາຍລັກອັກສອນ ພ້ອມລະບຸເຫດຜົນທີ່ບໍ່ສາມາດອະນຸຍາດໄດ້ ພາຍໃນ ວັນ.

**ມາດຕາ 22. (ໃໝ່) ການຂໍປ່ຽນແປງໃບອະນຸຍາດ**

ຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ທີ່ມີຈຸດປະສົງຂໍປ່ຽນແປງໃບອະນຸຍາດ ຕ້ອງປະຕິບັດຕາມດັ່ງນີ້:

1. ສະເໜີຫາ ຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ເພື່ອຄົ້ນຄວ້າພິຈາລະນາ ພາຍໃນໄລຍະເວລາ ຫ້າວັນລັດຖະການ ພາຍຫຼັງ ປະກອບເອກະສານຢ່າງຄົບຖ້ວນ ແລະ ຖືກຕ້ອງ;
2. ພາຍຫຼັງໄດ້ຮັບການເຫັນດີຈາກ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ຕ້ອງໄດ້ປະສານຫາ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເພື່ອດຳເນີນການທາງດ້ານເຕັກນິກ ພາຍໃນເວລາຫ້າວັນລັດຖະການ.

**ໝວດທີ 4**

**ສິດ ແລະ ພັນທະ**

**ມາດຕາ 23. (ໃໝ່) ສິດ ຂອງຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ**

ຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ມີສິດ ດັ່ງນີ້:

1. ເລືອກຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຕິດຕັ້ງລະບົບເຕັກນິກ;
2. ສະເໜີຫາຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຫຼື/ແລະ ອົງການຄຸ້ມຄອງວຽກງານໂທລະຄົມມະນາຄົມ ເພື່ອກວດກາຄຸນນະພາບການນຳໃຊ້;
3. ສະເໜີ ຂໍຕໍ່, ປ່ຽນແປງ, ໂຈະ ແລະ ຍົກເລີກ ໃບອະນຸຍາດ;
4. ຮັບຜິດຊອບຊຳລະມູນຄ່າ ການນຳໃຊ້ບໍລິການໂທລະຄົມມະນາຄົມ ສ່ວນໃດໜຶ່ງ ຫຼື ທັງໝົດ ແທນຜູ້ໃຊ້ບໍລິການເລກໝາຍໂທລະສັບພິເສດ ຂອງຕົນ;
5. ຂໍຂໍ້ມູນການນຳໃຊ້ເລກໝາຍໂທລະສັບພິເສດ ຈາກຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທີ່ຕິດຕັ້ງລະບົບເຕັກນິກໃຫ້ຕົນ;
6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 24. (ໃໝ່) ພັນທະຂອງ ຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ**

ຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ມີພັນທະດັ່ງນີ້:

1. ຊຳລະຄ່າທຳນຽມ, ຄ່າບໍລິການ, ຄ່າອຸປະກອນ, ຄ່າຕິດຕັ້ງ ແລະ ມູນຄ່າການນຳໃຊ້ບໍລິການໂທລະຄົມມະນາຄົມ ຄົບຖ້ວນ ຕາມລະບຽບການທີ່ກຳນົດ;
2. ເປີດໃຫ້ບໍລິການແກ່ສັງຄົມ ພາຍໃນ ສາມສິບວັນ ນັບແຕ່ມື້ໄດ້ຮັບອະນຸຍາດເປັນທາງການ;

3. ແຈ້ງອັດຕາມູນຄ່າ ການນຳໃຊ້ບໍລິການໂທລະຄົມມະນາຄົມ ຂອງເລກໝາຍໂທລະສັບພິເສດຂອງຕົນ ຢ່າງເປັນທາງການ ແລະ ເປີດເຜີຍ;
4. ແຈ້ງຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ໃນກໍລະນີ ປ່ຽນແປງໃບອະນຸຍາດ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25. (ໃໝ່) ສິດຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີສິດດັ່ງນີ້:

1. ປິດເລກໝາຍໂທລະສັບພິເສດ ທີ່ບໍ່ຊຳລະຄ່າການນຳໃຊ້ບໍລິການໂທລະຄົມມະນາຄົມ ຕາມລະບຽບການຂອງບໍລິສັດ, ຍົກເວັ້ນ ຜູ້ທີ່ໄດ້ຮັບການຍົກເວັ້ນຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
2. ເປີດນຳໃຊ້ເລກໝາຍໂທລະສັບພິເສດ ໃຫ້ຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ລວມທັງ ໃຫ້ບໍລິການພາຍໃນເຄືອຂ່າຍຂອງຕົນເອງ ຕາມການອະນຸຍາດຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
3. ສະເໜີ ຂໍຕໍ່, ປ່ຽນແປງ, ໂຈະ ແລະ ຍົກເລີກ ໃບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ເພື່ອໃຫ້ບໍລິການພາຍໃນເຄືອຂ່າຍຂອງຕົນເອງ;
4. ນຳໃຊ້ສິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26. (ໃໝ່) ພັນທະຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມມີພັນທະ ດັ່ງນີ້:

1. ຍົກເວັ້ນ ຄ່ານຳໃຊ້ການບໍລິການໂທລະຄົມມະນາຄົມ ໃດໜຶ່ງ ຫຼື ທັງໝົດ ຕາມການພິຈາລະນາເຫັນດີຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
2. ກວດກາ ແລະ ປັບປຸງຄຸນນະພາບ ລະບົບເຕັກນິກການນຳໃຊ້ເລກໝາຍພິເສດ ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ;
3. ເປີດເຊື່ອມຕໍ່ເລກໝາຍໂທລະສັບພິເສດ ໃຫ້ສາມາດໂທເຂົ້າ, ໂທອອກ, ສົ່ງຂໍ້ຄວາມເຂົ້າ, ສົ່ງຂໍ້ຄວາມອອກ ແລະ ເຊື່ອມຕໍ່ເຄືອຂ່າຍ ຫຼື ນຳໃຊ້ບໍລິການອື່ນ ຕາມການເຫັນດີ ຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ພາຍໃນ ສາມ ວັນລັດຖະການ;
4. ໄລ່ລຽງຄ່າການນຳໃຊ້ບໍລິການໂທລະຄົມມະນາຄົມກັບ ຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ ໃນກໍລະນີຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ສະເໜີຂໍຊຳລະຄ່າການນຳໃຊ້ບໍລິການໂທລະຄົມມະນາຄົມ ແທນຜູ້ໃຊ້ບໍລິການ;
5. ປະຕິບັດຕາມການແຈ້ງການ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5

## ການຊໍາລະ ແລະ ຍົກເວັ້ນ ຄ່າທໍານຽມ, ຄ່າບໍລິການ ເລກໝາຍໂທລະສັບພິເສດ, ມູນຄ່າການນໍາໃຊ້ບໍລິການໂທລະຄົມມະນາຄົມ

**ມາດຕາ 27. (ປັບປຸງ) ການຊໍາລະຄ່າທໍານຽມ ແລະ ຄ່າບໍລິການ ເລກໝາຍໂທລະສັບພິເສດ**

ຜູ້ໄດ້ຮັບໃບອະນຸຍາດນໍາໃຊ້ ເລກໝາຍໂທລະສັບພິເສດ ຕ້ອງຊໍາລະ ຄ່າທໍານຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດນໍາໃຊ້ໃນແຕ່ລະໄລຍະ.

**ມາດຕາ 28. (ປັບປຸງ) ການຍົກເວັ້ນ ຄ່າທໍານຽມ, ຄ່າບໍລິການ ເລກໝາຍໂທລະສັບພິເສດ ແລະ ມູນຄ່ານໍາໃຊ້ບໍລິການໂທລະຄົມມະນາຄົມ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ພິຈາລະນາຍົກເວັ້ນ ຕາມລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍ ຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດນໍາໃຊ້ໃນແຕ່ລະໄລຍະ;

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ພິຈາລະນາຍົກເວັ້ນ ມູນຄ່າການນໍາໃຊ້ບໍລິການໂທລະຄົມມະນາຄົມ ໃດໜຶ່ງ ຫຼື ທັງໝົດ ໃຫ້ແກ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານສຸກເສີນຂອງລັດ, ວຽກງານແຈ້ງເຕືອນໄພ ແລະ ບັນເທົາໄພພິບັດຕ່າງໆ ແກ່ສາທາລະນະຊົນ, ວຽກງານຂອງລັດ ກ່ຽວກັບການແກ້ໄຂລະບົບບໍ່ແຕກ, ວຽກງານສໍາຄັນລະດັບຊາດ ແລະ ວຽກງານອົງການຈັດຕັ້ງພັກ-ລັດ.

## ໝວດທີ 6

## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 29. (ປັບປຸງ) ຂໍ້ຫ້າມສໍາລັບຜູ້ໃຊ້ບໍລິການ**

ຫ້າມຜູ້ໃຊ້ບໍລິການ ມີພຶດຕິກໍາດັ່ງນີ້:

1. ໂທລົບກວນ ຜູ້ໄດ້ຮັບອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ;
2. ແຈ້ງຂໍ້ມູນທີ່ບິດເບືອນ ຫຼື ບໍ່ຖືກຕ້ອງຕາມຄວາມເປັນຈິງ ຕໍ່ຜູ້ໄດ້ຮັບອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ.

**ມາດຕາ 30. (ປັບປຸງ) ຂໍ້ຫ້າມສໍາລັບ ຜູ້ໄດ້ຮັບອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ ແລະ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຫ້າມຜູ້ໄດ້ຮັບອະນຸຍາດນໍາໃຊ້ເລກໝາຍໂທລະສັບພິເສດ ແລະ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີພຶດຕິກໍາດັ່ງນີ້:

1. ເປີດນຳໃຊ້ເລກໝາຍໂທລະສັບພິເສດ ໂດຍບໍ່ໄດ້ຮັບການອະນຸຍາດຈາກ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
2. ນຳໃຊ້ເລກໝາຍໂທລະສັບພິເສດ ບໍ່ສອດຄ່ອງຕາມເນື້ອໃນທີ່ລະບຸໄວ້ໃນໃບອະນຸຍາດ;
3. ໂອນໃບອະນຸຍາດເລກໝາຍໂທລະສັບພິເສດ ໃຫ້ຜູ້ອື່ນນຳໃຊ້ ໂດຍບໍ່ໄດ້ຮັບການເຫັນດີ ຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
4. ເປີດບໍລິການເລກໝາຍໂທລະສັບພິເສດ ເພື່ອໂທອອກໄປຕ່າງປະເທດ ແລະ ຮັບສາຍໂທເຂົ້າ ຈາກຕ່າງປະເທດ.

**ມາດຕາ 31. (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ຜູ້ທີ່ລະເມີດ ຂໍ້ຫ້າມ ແລະ ພັນທະ ຈະຖືກປະຕິບັດມາດຕະການດັ່ງລຸ່ມນີ້:

1. ໂທລົບກວນ, ແຈ້ງຂໍ້ມູນທີ່ບິດເບືອນ ຫຼື ບໍ່ຖືກຕ້ອງຕາມຄວາມເປັນຈິງ ຕໍ່ຜູ້ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ຈະຖືກກ່າວເຕືອນສຶກສາອົບຮົມການເມືອງແນວຄິດ, ກໍລະນີປະຕິບັດເປັນອາຈິນ ຈະຖືກປິດການໂທເຂົ້າເລກໝາຍດັ່ງກ່າວ ຫຼື ປິດຖາວອນເລກໝາຍໂທລະສັບ ດັ່ງກ່າວ;
2. ເປີດນຳໃຊ້ເລກໝາຍໂທລະສັບພິເສດ ໂດຍບໍ່ໄດ້ຮັບການອະນຸຍາດຈາກ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແມ່ນຈະຖືກປິດການນຳໃຊ້ ພ້ອມທັງປະຕິບັດມາດຕະການປັບໃໝ ຫ້າເທົ່າ ຂອງອັດຕາຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ລະບຸໄວ້ໃນລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການທີ່ປະກາດໃຊ້ໃນແຕ່ລະໄລຍະ;
3. ໂອນໃບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ໃຫ້ຜູ້ອື່ນນຳໃຊ້ ໂດຍບໍ່ໄດ້ຮັບການອະນຸຍາດຈາກ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ແມ່ນຈະຖືກຍົກເລີກໃບອະນຸຍາດນຳໃຊ້ ພ້ອມທັງ ປະຕິບັດມາດຕະການປັບໃໝຫ້າເທົ່າ ຂອງອັດຕາຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ລະບຸໄວ້ໃນລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ;
4. ນຳໃຊ້ເລກໝາຍໂທລະສັບພິເສດ ບໍ່ສອດຄ່ອງຕາມເນື້ອໃນທີ່ລະບຸໄວ້ໃນໃບອະນຸຍາດ ຄັ້ງທຳອິດຈະຖືກກ່າວເຕືອນ ແລະ ໃຫ້ປັບປຸງການບໍລິການໃຫ້ສອດຄ່ອງ ກັບການນຳໃຊ້ຕົວຈິງພາຍໃນ ສາມສິບວັນ, ຄັ້ງທີສອງ ຈະຖືກຍົກເລີກໃບອະນຸຍາດນຳໃຊ້ ແລະ ຖືກປັບໃໝ ສອງເທົ່າຂອງ ອັດຕາຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ລະບຸໄວ້ໃນລັດຖະບັນຍັດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການທີ່ປະກາດໃຊ້ໃນແຕ່ລະໄລຍະ;
5. ເປີດບໍລິການເລກໝາຍໂທລະສັບພິເສດ ເພື່ອໂທອອກໄປຕ່າງປະເທດ ແລະ ຮັບສາຍໂທເຂົ້າ ຈາກຕ່າງປະເທດ ຈະຖືກປັບໃໝ ຫ້າສິບລ້ານກີບຕໍ່ຄັ້ງ , ກໍລະນີ ມີຄວາມເສຍຫາຍເກີດຂຶ້ນຕ້ອງໄດ້ແທນຄືນຄ່າເສຍຫາຍ ແລະ ຮັບຜິດຊອບຕໍ່ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ມາຕໍ່ໃບອະນຸຍາດ ຊັກຊ້າ ຫຼັງຈາກໃບອະນຸຍາດໝົດອາຍຸ ຫຼື ຖືກໂຈະໃບອະນຸຍາດນຳໃຊ້ເລກໝາຍໂທລະສັບ ຈະຖືກປັບໃໝ 0,1% ຕໍ່ວັນ ຂອງມູນຄ່າທີ່ຕ້ອງໄດ້ຊຳລະ ຕາມທີ່ລະບຸໄວ້ໃນລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ ເລີ່ມແຕ່ວັນທີໃບອະນຸຍາດໝົດອາຍຸ;
7. ສຳລັບລາຍຮັບທີ່ໄດ້ຈາກການປັບໃໝ ຈຳນວນ 30% ມອບເຂົ້າກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ, 70% ມອບໃຫ້ອົງການດັດສົມໂທລະຄົມມະນາຄົມ ນຳໃຊ້ເຂົ້າໃນວຽກງານວິຊາການ.

## ໝວດທີ 7
## ການຄຸ້ມຄອງ ເລກໝາຍໂທລະສັບພິເສດ

### ມາດຕາ 32. (ໃໝ່) ອົງການຄຸ້ມຄອງ ເລກໝາຍໂທລະສັບພິເສດ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຄຸ້ມຄອງເລກໝາຍໂທລະສັບພິເສດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໃນການອອກອະນຸຍາດ ໂດຍມອບໃຫ້ ອົງການດັດສົມໂທລະຄົມມະນາຄົມ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

### ມາດຕາ 33. (ໃໝ່) ສິດ ແລະ ໜ້າທີ່ຂອງ ອົງການດັດສົມໂທລະຄົມມະນາຄົມ

ໃນການຄຸ້ມຄອງ ເລກໝາຍໂທລະສັບພິເສດ ອົງການດັດສົມໂທລະຄົມມະນາຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການນຳໃຊ້ເລກໝາຍໂທລະສັບພິເສດ ໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນການນຳໃຊ້ເລກໝາຍໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມລະບຽບການທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກຳນົດ;
2. ໂຄສະນາ, ເຜີຍແຜ່, ຊີ້ນຳ ແລະ ຕິດຕາມການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;
3. ກ່າວເຕືອນ ແລະ ນຳໃຊ້ມາດຕະການຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້;
4. ອອກໃບສັ່ງມອບ ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບເລກໝາຍໂທລະສັບພິເສດ ຕາມທີ່ກຳນົດໄວ້ໃນລະບຽບການ;
5. ອອກ, ຕໍ່, ໂຈະ ຫຼື ຍົກເລີກສິດນຳໃຊ້ເລກໝາຍໂທລະສັບພິເສດ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 8

## ບົດບັນຍັດສຸດທ້າຍ

**ມາດຕາ 34. (ປັບປຸງ) ການຈັດຕັ້ງປະຕິບັດ**

ມອບໃຫ້ ອົງການຄຸ້ມຄອງໂທລະຄົມມະນາຄົມ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 35. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງໄດ້ລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍ ການນຳໃຊ້ເລກໝາຍໂທລະສັບພິເສດ ສະບັບເລກທີ 3426/ປທສ, ລົງວັນທີ 12 ທັນວາ 2016.

**ລັດຖະມົນຕີ**

ບໍ່ວຽງຄຳ ວົງດາລາ

ຕາຕະລາງ ຄັດຕິດ 01 : ແຜນຈັດສັນເລກໝາຍໂທລະສັບ 03 ຕົວເລກ

| 1AB | B | | | | | | | | | |
|---|---|---|---|---|---|---|---|---|---|---|
| A | 0 | 1 | 2 | 3 | 4 | 5 | 6 | 7 | 8 | 9 |
| 0 | | | | | | | | | | |
| 1 | | | | | | | | | | |
| 2 | | | | | | | | | | |
| 3 | | | | | | | | | | |
| 4 | | | | | | | | | | |
| 5 | | | | | | | | | | |
| 6 | | | | | | | | | | |
| 7 | | | | | | | | | | |
| 8 | | | | | | | | | | |
| 9 | | | | | | | | | | |

| **ລຳດັບ** | **ແຖບສີ** | **ອະທິບາຍສີ** |
|---|---|---|
| 1 | | ຈັດສັນໃຫ້ຈັດສັນໃຫ້ວຽກງານສຸກເສີນຂອງລັດ |
| 2 | | ຈັດສັນໃຫ້ຫົວໜ່ວຍທຸລະກິດ. |
| 3 | | ຈັດສັນໃຫ້ວຽກສຳຄັນລະດັບຊາດ ແລະ ວຽກງານອົງການຈັດຕັ້ງລັດ |
| 4 | | ສະຫງວນ |

| **ສັນຍາລັກ** | **ຄວາມໝາຍ** |
|---|---|
| **1** | **ຕົວເລກລຳດັບທີ 1** |
| **A** | **ຕົວເລກລຳດັບທີ 2** |
| **B** | **ຕົວເລກລຳດັບທີ 3** |
| **X** | ແມ່ນຕົວເລກ ແຕ່ 0 ຫາ 9 |
| **Y** | ແມ່ນຕົວເລກ ແຕ່ 0 ຫາ 9 |
| **Z** | ແມ່ນຕົວເລກ ແຕ່ 0 ຫາ 9 |

**ຕາຕະລາງ ຄັດຕິດ 02 : ແຜນຈັດສັນເລກໝາຍໂທລະສັບ 03 ຕົວເລກ ເພີ່ມລະຫັດແຂວງ**

| **ລະຫັດແຂວງ** | **ເລກໝາຍໂທລະສັບພິເສດ** | **ໝາຍເຫດ** |
|---|---|---|
| **0YZ** | **1AB** | **ຈັດສັນຕາມທີ່ລະບຸໄວ້ໃນຕາຕະລາງ ໃນມາດຕາ 7** |

ຕາຕະລາງ ຄັດຕິດ 03 : ແຜນຈັດສັນເລກໝາຍໂທລະສັບ 04 ຕົວເລກ

| 1ABC | | C | | | | | | | | | |
|---|---|---|---|---|---|---|---|---|---|---|---|
| A | B | 0 | 1 | 2 | 3 | 4 | 5 | 6 | 7 | 8 | 9 |
| 0 | 0~9 | | | | | | | | | | |
| 1 | 0~4 | | | | | | | | | | |
| | 5~8 | | | | | | | | | | |
| | 9 | | | | | | | | | | |
| 2 | 0~9 | | | | | | | | | | |
| 3 | 0 | | | | | | | | | | |
| | 1~3 | | | | | | | | | | |
| | 4~9 | | | | | | | | | | |
| 4 | 0~9 | | | | | | | | | | |
| 5 | 0~4 | | | | | | | | | | |
| | 5~9 | | | | | | | | | | |
| 6 | 0~4 | | | | | | | | | | |
| | 5~9 | | | | | | | | | | |
| 7 | 0~9 | | | | | | | | | | |
| 8 | 1~9 | | | | | | | | | | |
| 9 | 0~8 | | | | | | | | | | |
| | 9 | | | | | | | | | | |

| ລຳດັບ | ແຖບສີ | ອະທິບາຍສີ |
|---|---|---|
| 1 | | ຈັດສັນໃຫ້ວຽກງານສຸກເສີນຂອງລັດ |
| 2 | | ຈັດສັນໃຫ້ຫົວໜ່ວຍທຸລະກິດ |
| 3 | | ຈັດສັນໃຫ້ວຽກສຳຄັນລະດັບຊາດ ແລະ ວຽກງານອົງການຈັດຕັ້ງລັດ |
| 4 | | ຈັດສັນໃຫ້ວຽກງານບໍ່ຫວັງຜົນກຳໄລ |
| 5 | | ສະຫງວນ |

| ສັນຍາລັກ | ຄວາມໝາຍ |
|---|---|
| 1 | **ຕົວເລກລຳດັບທີ 1** |
| A | **ຕົວເລກລຳດັບທີ 2** (ແມ່ນຕົວເລກ ແຕ່ 0 ຫາ 9) |
| B | **ຕົວເລກລຳດັບທີ 3** (ແມ່ນຕົວເລກ ແຕ່ 0 ຫາ 9) |
| C | **ຕົວເລກລຳດັບທີ 4** (ແມ່ນຕົວເລກ ແຕ່ 0 ຫາ 9) |
| X | ແມ່ນຕົວເລກ ແຕ່ 0 ຫາ 9 |
| Y | ແມ່ນຕົວເລກ ແຕ່ 0 ຫາ 9 |
| Z | ແມ່ນຕົວເລກ ແຕ່ 0 ຫາ 9 |

**ຕາຕະລາງ ຄັດຕິດ 04 : ແຜນຈັດສັນເລກໝາຍໂທລະສັບ 04 ຕົວເລກ ເພີ່ມລະຫັດແຂວງ.**

| ລະຫັດແຂວງ | ເລກໝາຍໂທລະສັບພິເສດ | ໝາຍເຫດ |
|---|---|---|
| 0YZ | 1ABC | ຈັດສັນຕາມຕາຕະລາງທີ່ລະບຸໄວ້ໃນ ມາດຕາ 8. |